ກະຊວງການເງິນ

# ໜັງສືຊວນຊື້

**ເພື່ອສະເໜີອອກຈຳໜ່າຍ**

**ພັນທະບັດລັດຖະບານ, ປະເພດ ພັນທະບັດດຸ່ນດ່ຽງງົບປະມານ, ຈຳນວນ 1.000.000 (ໜຶ່ງລ້ານ) ໜ່ວຍ, ມູນຄ່າກຳນົດ 1.000.000 (ໜຶ່ງລ້ານ) ກີບຕໍ່ໜ່ວຍ, ລາຄາຂາຍ 1.000.000 (ໜຶ່ງລ້ານ) ກີບຕໍ່ໜ່ວຍ, ມູນຄ່າລວມ 1.000.000.000.000 (ໜຶ່ງພັນຕື້) ກີບ ໂດຍແບ່ງຕາມອາຍຸ ດັ່ງລຸ່ມນີ້:**

ອາຍຸ 1 (ໜຶ່ງ) ປີ, ວັນທີ 16 ທັນວາ 2019 ຄືບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 5,30 (ຫ້າຈຸດສາມສິບ) ສ່ວນຮ້ອຍຕໍ່ປີ, ມູນຄ່າບໍ່ເກີນ 400.000.000.000 (ສີ່ຮ້ອຍຕື້) ກີບ;
ອາຍຸ 3 (ສາມ) ປີ, ວັນທີ 16 ທັນວາ 2021 ຄືບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,80 (ຫົກຈຸດແປດສິບ) ສ່ວນຮ້ອຍຕໍ່ປີ;
ອາຍຸ 5 (ຫ້າ) ປີ, ວັນທີ 16 ທັນວາ 2023 ຄືບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,95 (ຫົກຈຸດເກົ້າສິບຫ້າ) ສ່ວນຮ້ອຍຕໍ່ປີ;
ອາຍຸ 7 (ເຈັດ) ປີ, ວັນທີ 16 ທັນວາ 2025 ຄືບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 7,10 (ເຈັດຈຸດສິບ) ສ່ວນຮ້ອຍຕໍ່ປີ.

**ຂໍ້ສັງເກດທີ່ສຳຄັນ**: ໜັງສືຊວນຊື້ສະບັບນີ້ແມ່ນເອກະສານທີ່ສຳຄັນ ແລະ ຄວນອ່ານໃຫ້ເຂົ້າໃຈເນື້ອໃນທັງໝົດຂອງໜັງສືຊວນຊື້ສະບັບນີ້. ທ່ານຍັງສາມາດປຶກສາກັບບໍລິສັດຫຼັກຊັບ, ທີ່ປຶກສາກົດໝາຍ ຫຼື ຊ່ຽວຊານດ້ານອື່ນໆ ເພື່ອຂໍຄຳແນະນຳກ່ຽວກັບໜັງສືຊວນຊື້ສະບັບນີ້.

ກະຊວງການເງິນ

# ໜັງສືຊວນຊື້

## ເພື່ອສະເໜີອອກຈຳໜ່າຍ

**ພັນທະບັດລັດຖະບານ, ປະເພດ ພັນທະບັດດຸ່ນດ່ຽງງົບປະມານ, ຈຳນວນ 1.000.000 (ໜຶ່ງລ້ານ) ໜ່ວຍ, ມູນຄ່າກຳນົດ 1.000.000 (ໜຶ່ງລ້ານ) ກີບຕໍ່ໜ່ວຍ, ລາຄາຂາຍ 1.000.000 (ໜຶ່ງລ້ານ) ກີບຕໍ່ໜ່ວຍ, ມູນຄ່າລວມ 1.000.000.000.000 (ໜຶ່ງພັນຕື້) ກີບ ໂດຍແບ່ງຕາມອາຍຸ ດັ່ງລຸ່ມນີ້:**

ອາຍຸ 1 (ໜຶ່ງ) ປີ, ວັນທີ 16 ທັນວາ 2019 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 5,30 (ຫ້າຈຸດສາມສິບ) ສ່ວນຮ້ອຍຕໍ່ປີ, ມູນຄ່າບໍ່ເກີນ 400.000.000.000 (ສີ່ຮ້ອຍຕື້) ກີບ;
ອາຍຸ 3 (ສາມ) ປີ, ວັນທີ 16 ທັນວາ 2021 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,80 (ຫົກຈຸດແປດສິບ) ສ່ວນຮ້ອຍຕໍ່ປີ;
ອາຍຸ 5 (ຫ້າ) ປີ, ວັນທີ 16 ທັນວາ 2023 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,95 (ຫົກຈຸດເກົ້າສິບຫ້າ) ສ່ວນຮ້ອຍຕໍ່ປີ;
ອາຍຸ 7 (ເຈັດ) ປີ, ວັນທີ 16 ທັນວາ 2025 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 7,10 (ເຈັດຈຸດສິບ) ສ່ວນຮ້ອຍຕໍ່ປີ.

**ໃຫ້ແກ່: ມວນຊົນ**

**ໄລຍະເວລາເປີດຈອງຊື້ພັນທະບັດ:**

ເວລາ 8:30 ໂມງ ຫາ 15:30 ໂມງ ຕັ້ງແຕ່ວັນທີ 11 ຫາ 17 ທັນວາ 2018

**ຕົວແທນຈຳໜ່າຍ**

LANEXANG Securities Public Company

BCEL·KT

LCS ບໍລິສັດຫຼັກຊັບ ລາວ- ຈີນ ຈຳກັດ Lao-China Securities Company Limited

**ຕົວແທນຈຳໜ່າຍຫຼັກ**

**ນາຍທະບຽນ**

ພະແນກ ສຳລະສະສາງ ແລະ ຮັບຝາກຫຼັກຊັບ ຂອງ ຕະຫຼາດຫຼັກຊັບລາວ

**ສາລະບານ**


ນິຍາມຄໍາສັບ

ພາກທີ I ສະຫຼຸບຂໍ້ມູນການອອກຈໍາໜ່າຍພັນທະບັດໂດຍຫຍໍ້ ............................................................1

ພາກທີ II ຂໍ້ມູນໂດຍຫຍໍ້ຂອງຜູ້ອອກພັນທະບັດ ......................................................................4

1. ຂໍ້ມູນເສດຖະກິດມະຫາພາກ ......................................................................................4
2. ອັດຕາແລກປ່ຽນ .....................................................................................................5
3. ແຜນການນໍາໃຊ້ທຶນ ................................................................................................5
4. ແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ......................................................................5

ພາກທີ III ຂໍ້ມູນກ່ຽວກັບພັນທະບັດທີ່ສະເໜີອອກຈໍາໜ່າຍ ..........................................................6

1. ລາຍລະອຽດຂອງພັນທະບັດທີ່ສະເໜີອອກຈໍາໜ່າຍ ..........................................................6
2. ການຊໍາລະດອກເບ້ຍ, ຕົ້ນທຶນ ແລະ ການຊື້ພັນທະບັດຄືນ..................................................7
3. ການຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ......................................................................8
4. ພັນທະທາງອາກອນຂອງຜູ້ຖືຄອງພັນທະບັດ ...................................................................8
5. ໄລຍະເປີດຈອງຊື້ພັນທະບັດ......................................................................................8
6. ວິທີການຈອງຊື້ພັນທະບັດ .........................................................................................8
7. ວິທີການຊໍາລະເງິນຈອງຊື້ພັນທະບັດ..............................................................................9
8. ວິທີການຈັດສັນພັນທະບັດ.........................................................................................9
9. ການອອກໃບຢັ້ງຢືນການຈັດສັນພັນທະບັດ....................................................................10
10. ການສົ່ງເງິນຈອງຊື້ພັນທະບັດຄືນ ກໍລະນີບໍ່ໄດ້ຮັບການຈັດສັນພັນທະບັດ.................................10
11. ການສົ່ງມອບພັນທະບັດ..........................................................................................10
12. ຂໍ້ຈໍາກັດຂອງການໂອນພັນທະບັດ...............................................................................10
13. ການນໍາໃຊ້ພັນທະບັດເປັນຫຼັກຊັບຄໍ້າປະກັນ...................................................................10
14. ການສະເໜີຂໍໃບຢັ້ງຢືນຍອດການຖືຄອງພັນທະບັດ ..........................................................10
15. ສິດ ແລະ ໜ້າທີ່ ຂອງຜູ້ອອກພັນທະບັດ ແລະ ຜູ້ຖືຄອງພັນທະບັດ .......................................10
16. ຂໍ້ມູນຜູ້ອອກພັນທະບັດ, ທີ່ປຶກສາດ້ານການເງິນ ແລະ ຕົວແທນຈໍາໜ່າຍ.................................11

ພາກທີ IV ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ ...................................................................12

1. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຜູ້ອອກພັນທະບັດ .........................................12
2. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນທີ່ປຶກສາດ້ານການເງິນ ແລະ ຕົວແທນຈໍາໜ່າຍພັນທະບັດ ....13

ເອກະສານຄັດຕິດ 1 ຮ່າງໃບພັນທະບັດລວມ

ເອກະສານຄັດຕິດ 2ແບບຟອບສະເໜີຂໍຈອງຊື້ພັນທະບັດ

**ນິຍາມຄໍາສັບ**

| | |
|---|---|
| ສປປ ລາວ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ກົບ | ສະກຸນເງິນກີບຂອງ ສປປ ລາວ |
| ພັນທະບັດ | ພັນທະບັດລັດຖະບານ |
| ໃບພັນທະບັດລວມ | ໃບພັນທະບັດ ທີ່ບໍ່ບົ່ງຊື່ຜູ້ຖືຄອງ ຊຶ່ງຜູ້ອອກພັນທະບັດຕ້ອງນໍາໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ |
| ຜູ້ອອກພັນທະບັດ | ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ |
| ທຫລ | ທະນາຄານແຫ່ງ ສປປ ລາວ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| ມື້ປິດປື້ມ | ມື້ປິດປື້ມບັນຊີທະບຽນຜູ້ຖືຄອງພັນທະບັດ |
| ນາຍທະບຽນ | ສູນຮັບຝາກຫຼັກຊັບ ຫຼື ຜູ້ທີ່ໄດ້ຮັບການແຕ່ງຕັ້ງເປັນນາຍທະບຽນຕາມສັນຍາວ່າດ້ວຍການແຕ່ງຕັ້ງຕາມລະບຽບກົດໝາຍຂອງ ສປປ ລາວ |
| ສູນຮັບຝາກຫຼັກຊັບ | ພະແນກ ຊໍາລະສະສາງ ແລະ ຮັບຝາກຫຼັກຊັບຂອງ ຕລຊລ |
| ທີ່ປຶກສາດ້ານການເງິນ | ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ |
| ຕົວແທນຈໍາໜ່າຍຫຼັກ | ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ |
| ຕົວແທນຈໍາໜ່າຍ | ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ |
| ຕລຊລ | ຕະຫຼາດຫຼັກຊັບລາວ |
| ມື້ປິດການຈອງຊື້ພັນທະບັດ | ວັນທີ 17 ທັນວາ 2018 ເຊິ່ງເປັນມື້ສຸດທ້າຍຂອງໄລຍະການຈອງຊື້ພັນທະບັດ |

**ພາກທີ I**

**ສະຫຼຸບຂໍ້ມູນການອອກຈຳໜ່າຍພັນທະບັດໂດຍຫຍໍ້**

ຂໍ້ມູນໂດຍຫຍໍ້ສະບັບນີ້ເປັນສ່ວນໜຶ່ງຂອງໜັງສືຊວນຊື້ ເຊິ່ງໄດ້ສະຫຼຸບຂໍ້ມູນໂດຍຫຍໍ້ກ່ຽວກັບການອອກຈຳໜ່າຍພັນທະບັດ. ຜູ້ລົງທຶນສາມາດພົວພັນເອົາໜັງສືຊວນຊື້ໄດ້ກັບຕົວແທນຈຳໜ່າຍ ຫຼື ຜູ້ອອກພັນທະບັດ ຫຼື ດາວໂຫຼດໄດ້ຈາກເວບໄຊ້ຂອງຕະຫຼາດຫຼັກຊັບລາວ: www.lsx.com.la

ພັນທະບັດລັດຖະບານ ມູນຄ່າລວມ 1.000.000.000.000 (ໜຶ່ງພັນຕື້) ກີບ ໂດຍແບ່ງຕາມອາຍຸ ດັ່ງລຸ່ມນີ້:

ອາຍຸ 1 (ໜຶ່ງ) ປີ, ວັນທີ 16 ທັນວາ 2019 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 5,30 (ຫ້າຈຸດສາມສິບ) ສ່ວນຮ້ອຍຕໍ່ປີ, ມູນຄ່າບໍ່ເກີນ 400.000.000.000 (ສີ່ຮ້ອຍຕື້) ກີບ;
ອາຍຸ 3 (ສາມ) ປີ, ວັນທີ 16 ທັນວາ 2021 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,80 (ຫົກຈຸດແປດສິບ) ສ່ວນຮ້ອຍຕໍ່ປີ;
ອາຍຸ 5 (ຫ້າ) ປີ, ວັນທີ 16 ທັນວາ 2023 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,95 (ຫົກຈຸດເກົ້າສິບຫ້າ) ສ່ວນຮ້ອຍຕໍ່ປີ;
ອາຍຸ 7 (ເຈັດ) ປີ, ວັນທີ 16 ທັນວາ 2025 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 7,10 (ເຈັດຈຸດສິບ) ສ່ວນຮ້ອຍຕໍ່ປີ.

| | |
|---|---|
| ຜູ້ອອກພັນທະບັດ | ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ |
| ປະເພດ | ພັນທະບັດຖົ່ວເຄື່ອງງົບປະມານ |
| ຈຳນວນ | 1.000.000 ໜ່ວຍ |
| ມູນຄ່າກຳນົດ | 1.000.000 ກີບຕໍ່ໜ່ວຍ |
| ລາຄາຂາຍ | 1.000.000 ກີບຕໍ່ໜ່ວຍ |
| ສະກຸນເງິນ | ກີບ |
| ວັນ, ເດືອນ, ປີ ອອກພັນທະບັດ | 17 ທັນວາ 2018 |
| ງວດການຈ່າຍດອກເບ້ຍ | ສອງຄັ້ງຕໍ່ປີ |
| ວັນ, ເດືອນ ຈ່າຍດອກເບ້ຍ | 16 ມິຖຸນາ ແລະ 16 ທັນວາ ຂອງແຕ່ລະປີ |
| ການສະເໜີຂາຍ | ໃຫ້ກັບມວນຊົນ |
| ການຜິດນັດຊຳລະ | ການອອກພັນທະບັດຊຸດນີ້ຈະບໍ່ມີການຜິດນັດຊຳລະ |
| ໄລຍະເວລາເປີດຈອງຊື້ພັນທະບັດ | ວັນທີ 11 ຫາ 17 ທັນວາ 2018 |

**ການຈອງຊື້ພັນທະບັດ**

ໃນການອອກຈຳໜ່າຍພັນທະບັດທັງໝົດ ການຈອງຊື້ພັນທະບັດຕ້ອງຊື້ຂັ້ນຕ່ຳ 10.000.000 (ສິບລ້ານ) ກີບ ແລະ ທະວີຄູນຄັ້ງລະ 10.000.000 (ສິບລ້ານ) ກີບຂຶ້ນໄປ.

**ວິທີການຈັດສັນພັນທະບັດ**

ພາຍຫຼັງທີ່ຕົວແທນຈຳໜ່າຍ ໄດ້ຮັບການຈອງຊື້ພັນທະບັດທີ່ຖືກຕ້ອງຕາມຂັ້ນຕອນແລ້ວ ການແບ່ງປັນພັນທະບັດໃຫ້ນັກລົງທຶນແມ່ນຈະໄດ້ດຳເນີນໄປ ເຊິ່ງຄາດວ່າຈະສຳເລັດພາຍໃນ 3 ວັນລັດຖະການ ຫຼັງຈາກສິ້ນສຸດໄລຍະເວລາການເປີດຈອງຊື້ພັນທະບັດ ຕົວແທນຈຳໜ່າຍມີສິດພິຈາລະນາໃນການແບ່ງປັນພັນທະບັດໃຫ້ກັບນັກລົງທຶນ ໂດຍການນຳໃຊ້ວິທີການ "ມາກ່ອນໄດ້ກ່ອນ" ແຕ່ພັນທະບັດຈະຖືກຈັດສັນໃຫ້ສອດຄ່ອງຕາມລະບຽບການ ເຖິງຢ່າງໃດກໍ່ຕາມ ຕົວແທນຈຳໜ່າຍພັນທະບັດຂໍສະຫງວນສິດໃນການປະຕິເສດການຈອງຊື້ພັນທະບັດ ແລະ ການແບ່ງປັນພັນທະບັດຕາມໃບຈອງຊື້ ໃນກໍລະນີທີ່ຕົວແທນຈຳໜ່າຍພິຈາລະນາແລ້ວເຫັນວ່າການຈອງຊື້ພັນທະບັດດັ່ງກ່າວ ເກີດບັນຫາ ຫຼື ຂໍ້ຈຳກັດໃນການດຳເນີນການ ເພື່ອໃຫ້ການອອກຈຳໜ່າຍພັນທະບັດໃນຄັ້ງນີ້ປະສົບຜົນສຳເລັດ.

ໃນກໍລະນີພັນທະບັດທີ່ອອກຈຳໜ່າຍຫາກຖືກຈອງຊື້ໝົດກ່ອນວັນເວລາທີ່ກຳນົດໄວ້ ຕົວແທນຈຳໜ່າຍສາມາດປິດການຈອງຊື້ພັນທະບັດກ່ອນເວລາທີ່ກຳນົດໄວ້.

**ການຈົດທະບຽນ ໃນຕະຫຼາດຫຼັກຊັບ**

ຜູ້ອອກພັນທະບັດ ຈະເອົາພັນທະບັດໄປຈົດທະບຽນໃນ ຕລຊລ ເພື່ອດຳເນີນການຊື້-ຂາຍພັນທະບັດ ໂດຍປະຕິບັດຕາມລະບຽບການຈົດທະບຽນຂອງ ຕລຊລ.

**ພັນທະທາງອາກອນຂອງຜູ້ຖືຄອງພັນທະບັດ**

ອີງຕາມ ດຳລັດວ່າດ້ວຍພັນທະບັດລັດຖະບານ ເລກທີ 101/ລບ, ລົງວັນທີ 20 ມີນາ 2017, ມາດຕາ 37 ລະບຸໄວ້ວ່າ: ຜູ້ຖືຄອງພັນທະບັດ ຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກອັດຕາດອກເບ້ຍພັນທະບັດ ຕາມກົດໝາຍທີ່ໄດ້ກຳນົດໄວ້.

**ການນຳໃຊ້ພັນທະບັດເປັນຫຼັກຊັບຄ້ຳປະກັນ**

ພັນທະບັດທີ່ອອກຈຳໜ່າຍເປັນຫຼັກຊັບອະໃບ (Scripless) ດັ່ງນັ້ນ ຜູ້ຖືຄອງພັນທະບັດ ທີ່ມີຄວາມຕ້ອງການນຳເອົາພັນທະບັດ ໄປເປັນຫຼັກຊັບຄ້ຳປະກັນ ຕ້ອງສະເໜີຕໍ່ສູນຮັບຝາກຫຼັກຊັບ ເພື່ອດຳເນີນການຕາມລະບຽບທີ່ກ່ຽວຂ້ອງ.

**ຂໍ້ມູນຜູ້ອອກພັນທະບັດ, ຕົວແທນຈຳໜ່າຍ ແລະ ນາຍທະບຽນ**

| ຊື່ | ທີ່ຢູ່ |
|---|---|
| ຜູ້ອອກພັນທະບັດ | ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ, ສຳນັກງານຕັ້ງຢູ່ ຖະໜົນ 23 ສິງຫາ, ຕູ້ ປນ 44, ນະຄອນຫຼວງວຽງຈັນ, ສປປ ລາວ<br>Website: www.mof.gov.la |
| ຕົວແທນຈຳໜ່າຍ ຫຼັກ | ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ<br>ສຳນັກງານຕັ້ງຢູ່ຊັ້ນ 5, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 265-461-4, ແຟກສ: (856-21) 265-465-6<br>Website: www.lxs.com.la |
| ຕົວແທນຈຳໜ່າຍ ຮ່ວມ | ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ<br>ສຳນັກງານຕັ້ງຢູ່ຊັ້ນ 7, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 265477, ແຟກສ: (856-21) 265488<br>Website: www.bcel-kt.com |
| ຕົວແທນຈຳໜ່າຍ ຮ່ວມ | ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ<br>ສຳນັກງານຕັ້ງຢູ່ຊັ້ນ 6, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 419220, ແຟກສ: (856-21) 419221<br>Website: www.lcs.com.la |
| ນາຍທະບຽນ | ຕະຫຼາດຫຼັກຊັບລາວ<br>ພະແນກ ຊຳລະສະສາງ ແລະ ຮັບຝາກຫຼັກຊັບ<br>ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 454 361-4, ແຟກສ: (856-21) 454 360<br>Website: www.lsx.com.la |

## ພາກທີ II

## ຂໍ້ມູນໂດຍຫຍໍ້ຂອງຜູ້ອອກພັນທະບັດ

### 1. ຂໍ້ມູນເສດຖະກິດມະຫາພາກ

ຕາຕະລາງລຸ່ມນີ້ແມ່ນການສະຫຼູບຂໍ້ມູນເສດຖະກິດມະຫາພາກຂອງ ສປປ ລາວ ຕາມແຕ່ລະໄລຍະ.

| ຂະແໜງການຜະລິດ | 2013 | 2014 | 2015 | 2016 | 2017(P) |
|---|---|---|---|---|---|
| GDP ຕາມລາຄາຄົງທີ່* (%) | 8,03 | 7,61 | 7,27 | 7,02 | 6,89 |
| GDP ຕາມລາຄາຄົງທີ່* (ຕື້ກີບ) | 88.160 | 94.871 | 101.768 | 108.915 | 116.422 |
| GDP ຕາມລາຄາໃນປີ (ຕື້ກີບ) | 93.868 | 106.797 | 117.252 | 129.279 | 140.749 |
| ອັດຕາເງິນເຟີ້ທ້າຍປີ (%) | 6,65 | 2,40 | 0,90 | 2,49 | 0,15 |
| ອັດຕາເງິນເຟີ້ (%) | 6,37 | 4,13 | 1,28 | 1,60 | 0,83 |
| **ການເງິນຂອງລັດ (%) ຕໍ່ GDP** | **2013(R)** | **2014(R)** | **2015(R)** | **2016(R)** | **2017(P)** |
| ລາຍຮັບງົບປະມານທັງໝົດ (ລວມເງິນຊ່ວຍເຫຼືອລ້າ) | 20,21 | 21,86 | 20,21 | 16,33 | 16,07 |
| ລາຍຮັບພາຍໃນ | 16,28 | 16,29 | 16,27 | 14,98 | 14,51 |
| ເງິນຊ່ວຍເຫຼືອລ້າ | 3,93 | 5,57 | 3,94 | 1,35 | 1,56 |
| ລາຍຈ່າຍງົບປະມານທັງໝົດ | 24,50 | 25,46 | 26,14 | 21,52 | 21,62 |
| ລາຍຈ່າຍບໍລິຫານປົກກະຕິ | 16,69 | 15,61 | 15,38 | 15,46 | 12,46 |
| ລາຍຈ່າຍລົງທຶນ | 7,81 | 9,84 | 10,76 | 6,07 | 9,16 |
| ດຸນງົບປະມານ | (4,29) | (3,60) | (5,93) | (5,19) | (5,55) |
| ດຸນງົບປະມານ (ບໍ່ລວມເງິນຊ່ວຍເຫຼືອລ້າ) | (8,22) | (9,17) | (9,87) | (6,54) | (7,11) |
| **ຂະແໜງເງິນຕາ (%)** | **2013** | **2014** | **2015** | **2016** | **2017** |
| ປະລິມານເງິນ (M2) | 17,02 | 25,22 | 14,67 | 10,09 | 12,23 |
| **ຂະແໜງການເງິນຕ່າງປະເທດ (%) ຕໍ່ GDP** | **2013(R)** | **2014(R)** | **2015(R)** | **2016(R)** | **2017(P)** |
| ດຸນການຊໍາລະລວມ | (0,65) | 1,16 | 1,19 | (1,08) | 1,18 |
| ດຸນບັນຊີຊໍາລະປົກກະຕິ | (7,83) | (14,50) | (15,73) | (8,71) | (6,99) |
| ດຸນການຄ້າ | (6,56) | (12,80) | (14,02) | (7,09) | (4,76) |
| ດຸນບັນຊີການເງິນ | (14,63) | (14,37) | (20,24) | (15,93) | (12,63) |
| ຍອດໜີ້ສິນຕໍ່ຕ່າງປະເທດ | 42,56 | 43,12 | 45,29 | 48,51 | 50,03 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ

**ໝາຍເຫດ:** GDP ໝາຍເຖິງລວມຍອດຜະລິດຕະພັນພາຍໃນ

P ໝາຍເຖິງຕົວເລກເບື້ອງຕົ້ນ

R ໝາຍເຖິງຕົວເລກປັບປຸງໃໝ່

* ລາຍການຄົງທີ່ ແມ່ນອີງໃສ່ຖານປີ 2012

## 2. ອັດຕາແລກປ່ຽນ

ທຫລ ໄດ້ນຳໃຊ້ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງແນໃສ່ເພື່ອຮັບປະກັນສະຖຽນລະພາບທາງດ້ານເງິນຕາໃຫ້ມີຄວາມໝັ້ນທ່ຽງ ດ້ວຍການຈັດຕັ້ງປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດເພື່ອເປັນບ່ອນອີງໃນການກຳນົດຂອບຊ່ອງຫວ່າງລະຫວ່າງຜູ້ຊື້ ແລະ ຂາຍອັດຕາແລກປ່ຽນປະຈຳວັນສະກຸນເງິນກີບ/ໂດລາ ແລະ ກີບ/ບາດ ໃຫ້ກັບທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ. ດັດສົມຕະຫຼາດເງິນຕາຕ່າງປະເທດ ເມື່ອເຫັນວ່າມີຄວາມຈຳເປັນ ໄປຄຽງຄູ່ກັບການຕິດຕາມກະແສເງິນສົດໄຫຼເຂົ້າ-ອອກຢ່າງເປັນປົກກະຕິ.

**ອັດຕາແລກປ່ຽນຂອງ ສປປ ລາວປີ 2003 – 2017**

| ປີ | ກີບ/ໂດລາ | | ກີບ/ບາດ | |
|---|---|---|---|---|
| | ສະເລ່ຍ (ຂາຍ) | ທ້າຍປີ (ຂາຍ) | ສະເລ່ຍ (ຂາຍ) | ທ້າຍປີ (ຂາຍ) |
| 2003 | 10.607 | 10.473 | 257 | 265 |
| 2004 | 10.647 | 10.382 | 266 | 267 |
| 2005 | 10.673 | 10.811 | 267 | 266 |
| 2006 | 10.149 | 9.725 | 269 | 271 |
| 2007 | 9.605 | 9.380 | 279 | 281 |
| 2008 | 8.751 | 8.481 | 264 | 244 |
| 2009 | 8.516 | 8.489 | 249 | 255 |
| 2010 | 8.259 | 8.058 | 261 | 268 |
| 2011 | 8.030 | 8.017 | 264 | 259 |
| 2012 | 8.007 | 7.993 | 258 | 261 |
| 2013 | 7.861 | 8.017 | 257 | 250 |
| 2014 | 8.057 | 8.095 | 250 | 250 |
| 2015 | 8.131 | 8.153 | 241 | 228 |
| 2016 | 8.126 | 8.195 | 232 | 231 |
| 2017 | 8.246 | 8.300 | 245 | 256 |

ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

## 3. ແຜນການນຳໃຊ້ທຶນ

ລາຍຮັບສຸດທິທີ່ໄດ້ຈາກການອອກພັນທະບັດຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການບໍລິຫານທົ່ວໄປຂອງລັດຖະບານ, ດັດສົມງົບປະມານ ແລະ ລົງທຶນຕາມໂຄງການຂອງລັດຖະບານ.

## 4. ແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ

ຜູ້ອອກພັນທະບັດຈະຊຳລະດອກເບ້ຍ ສອງຄັ້ງຕໍ່ປີ ຄືທຸກໆວັນທີ 16 ມິຖຸນາ ແລະ 16 ທັນວາ ຂອງແຕ່ລະປີ ແລະ ຕົ້ນທຶນຈະຊຳລະໃນງວດສຸດທ້າຍຂອງແຕ່ລະປີທີ່ຄົບກຳນົດ.

## ພາກທີ III

## ຂໍ້ມູນກ່ຽວກັບພັນທະບັດທີ່ສະເໜີອອກຈຳໜ່າຍ

ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ, ສຳນັກງານຕັ້ງຢູ່ຖະໜົນ 23 ສິງຫາ, ຕູ້ ປນ 44, ນະຄອນຫຼວງວຽງຈັນ, ສປປ ລາວ, ໂທ (856-21) 412142 ມີຈຸດປະສົງສະເໜີອອກຈຳໜ່າຍພັນທະບັດ ເຊິ່ງມີລາຍອຽດ ແລະ ຂໍ້ມູນທີ່ສຳຄັນດັ່ງຕໍ່ໄປນີ້:

### 1. ລາຍລະອຽດຂອງພັນທະບັດທີ່ສະເໜີອອກຈຳໜ່າຍ

ພັນທະບັດລັດຖະບານ ມູນຄ່າລວມ 1.000.000.000.000 (ໜຶ່ງພັນຕື້) ກີບ ໂດຍແບ່ງຕາມອາຍຸ ດັ່ງລຸ່ມນີ້:
ອາຍຸ 1 (ໜຶ່ງ) ປີ, ວັນທີ 16 ທັນວາ 2019 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 5,30 (ຫ້າຈຸດສາມສິບ) ສ່ວນຮ້ອຍຕໍ່ປີ, ມູນຄ່າບໍ່ເກີນ 400.000.000.000 (ສີ່ຮ້ອຍຕື້) ກີບ;
ອາຍຸ 3 (ສາມ) ປີ, ວັນທີ 16 ທັນວາ 2021 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,80 (ຫົກຈຸດແປດສິບ) ສ່ວນຮ້ອຍຕໍ່ປີ;
ອາຍຸ 5 (ຫ້າ) ປີ, ວັນທີ 16 ທັນວາ 2023 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 6,95 (ຫົກຈຸດເກົ້າສິບຫ້າ) ສ່ວນຮ້ອຍຕໍ່ປີ;
ອາຍຸ 7 (ເຈັດ) ປີ, ວັນທີ 16 ທັນວາ 2025 ຄົບກຳນົດເວລາໄຖ່ຖອນ ແລະ ອັດຕາດອກເບ້ຍ 7,10 (ເຈັດຈຸດສິບ) ສ່ວນຮ້ອຍຕໍ່ປີ.

| | |
|---|---|
| ຜູ້ອອກພັນທະບັດ | ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ |
| ປະເພດ | ພັນທະບັດດຸ່ນດ່ຽງງົບປະມານ |
| ຈຳນວນ | 1.000.000 ໜ່ວຍ |
| ມູນຄ່າກຳນົດ | 1.000.000 ກີບຕໍ່ໜ່ວຍ |
| ລາຄາຂາຍ | 1.000.000 ກີບຕໍ່ໜ່ວຍ |
| ສະກຸນເງິນ | ກີບ |
| ວັນ, ເດືອນ, ປີ ອອກພັນທະບັດ | 17 ທັນວາ 2018 |
| ງວດການຈ່າຍດອກເບ້ຍ | ສອງຄັ້ງຕໍ່ປີ |
| ວັນ, ເດືອນ ຈ່າຍດອກເບ້ຍ | 16 ມິຖຸນາ ແລະ 16 ທັນວາ ຂອງແຕ່ລະປີ |
| ຕົວແທນຈຳໜ່າຍ | (ກ) ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ (ຕົວແທນຈຳໜ່າຍຫຼັກ);<br>(ຂ) ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ;<br>(ຄ) ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ. |
| ການສະເໜີຂາຍ | ໃຫ້ແກ່ມວນຊົນ |
| ການຜິດນັດຊຳລະ | ການອອກພັນທະບັດຊຸດນີ້ຈະບໍ່ມີການຜິດນັດຊຳລະ |
| ໄລຍະເວລາເປີດຈອງຊື້ພັນທະບັດ | ວັນທີ 11 ຫາ 17 ທັນວາ 2018 |
| ກົດໝາຍ | ພັນທະບັດຊຸດນີ້ຈະຖືກຄຸ້ມຄອງໂດຍກົດໝາຍຂອງ ສປປ ລາວ |

| | |
|---|---|
| ໃບຈອງຊື້ພັນທະບັດ | ຜູ້ຈອງຊື້ພັນທະບັດທຸກຄົນຈະຕ້ອງຕື່ມຂໍ້ມູນຕາມແບບຟອມການຈອງຊື້ພັນທະບັດໃຫ້ຄົບຖ້ວນ ແລະ ຕ້ອງມີບັນຊີພັນທະບັດນໍາບໍລິສັດຫຼັກຊັບ |
| ນາຍທະບຽນ ແລະ ຜູ້ຮັບຝາກພັນທະບັດ | ພະແນກ ຊໍາລະສະສາງ ແລະ ຮັບຝາກຫຼັກຊັບຂອງ ຕລຊລ |
| ການຈົດທະບຽນ | ຕລຊລ |

## 2. ການຊໍາລະດອກເບ້ຍ, ຕົ້ນທຶນ ແລະ ການຊື້ພັນທະບັດຄືນ

| | |
|---|---|
| ການຄິດໄລ່ດອກເບ້ຍ | ການຄິດໄລ່ດອກເບ້ຍຂອງພັນທະບັດໃນແຕ່ລະງວດ ຈະຖືກຄິດໄລ່ໂດຍການຄູນ (ກ) ມູນຄ່າຍັງເຫຼືອຂອງພັນທະບັດແຕ່ລະຊຸດ ແລະ ອັດຕາດອກເບ້ຍທີ່ຕ້ອງຈ່າຍ (ຂ) ການຄິດໄລ່ດອກເບ້ຍໃນປີໜຶ່ງກໍານົດເອົາ 365 (ສາມຮ້ອຍຫົກສິບຫ້າ) ວັນ ຫຼື ຈໍານວນມື້ຕົວຈິງໃນປີປະຕິທິນນັ້ນ ແລະ ໃຫ້ຜົນຂອງການຄິດໄລ່ດອກເບ້ຍພັນທະບັດກໍານົດຈໍານວນທົດສະນິຍົມ 2 (ສອງ) ຕໍາແໜ່ງ (ໃນກໍລະນີຜົນອອກມາມີ 3 (ສາມ) ຕໍາແໜ່ງ ໃຫ້ປັດເສດທົດສະນິຍົມໃນຕໍາແໜ່ງທີ 2 (ສອງ) ຂຶ້ນ ຫາກມີເລກເສດຫຼາຍກວ່າ ຫຼື ເທົ່າກັບ 5 (ຫ້າ), ນອກນັ້ນໃຫ້ປັດລົງ). |
| ວິທີການຊໍາລະດອກເບ້ຍ | ຜູ້ອອກພັນທະບັດຈະຊໍາລະດອກເບ້ຍແຕ່ລະງວດ ໃຫ້ແກ່ຜູ້ຖືຄອງພັນທະບັດຜ່ານນາຍທະບຽນພັນທະບັດ ຕາມຊື່ທີ່ປາກົດຢູ່ໃນປື້ມທະບຽນຜູ້ຖືຄອງພັນທະບັດໃນມື້ປິດປື້ມເພື່ອກໍານົດສິດຮັບດອກເບ້ຍແລ້ວໂອນໃຫ້ບໍລິສັດຫຼັກຊັບເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນຕາມຖານລູກຄ້າຂອງແຕ່ລະບໍລິສັດໂດຍການໂອນເງິນຜ່ານທະນາຄານຕົວແທນຂອງແຕ່ລະບໍລິສັດ ຫຼື ວິທີອື່ນໆ ຕາມຜູ້ອອກພັນທະບັດ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ, ສ່ວນການຊໍາລະດອກເບ້ຍງວດສຸດທ້າຍ ແມ່ນຈະຊໍາລະພ້ອມກັບຕົ້ນທຶນ. |
| ການໄຖ່ຖອນພັນທະບັດໃນວັນຄົບກໍານົດ | ຜູ້ອອກພັນທະບັດຈະຊໍາລະຕົ້ນທຶນພ້ອມກັບດອກເບ້ຍງວດສຸດທ້າຍ ໃຫ້ແກ່ຜູ້ຖືຄອງພັນທະບັດຜ່ານນາຍທະບຽນພັນທະບັດ ຕາມຊື່ທີ່ປາກົດຢູ່ໃນປື້ມທະບຽນຜູ້ຖືຄອງພັນທະບັດໃນມື້ປິດປື້ມເພື່ອກໍານົດສິດຮັບດອກເບ້ຍແລ້ວໂອນໃຫ້ບໍລິສັດຫຼັກຊັບເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນຕາມຖານລູກຄ້າຂອງແຕ່ລະບໍລິສັດໂດຍການ ໂອນເງິນຜ່ານທະນາຄານຕົວແທນຂອງແຕ່ລະບໍລິສັດ ຫຼື ວິທີອື່ນໆ ຕາມຜູ້ອອກພັນທະບັດ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ. |
| ການຊື້ຄືນພັນທະບັດ | ຜູ້ອອກພັນທະບັດມີສິດຊື້ພັນທະບັດຄືນຈາກຜູ້ຖືຄອງພັນທະບັດໂດຍຜ່ານ ຕລຊລ, ການຊື້ຄືນພັນທະບັດ ແມ່ນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າທີ່ກໍານົດໄວ້ໃນໜ້າໃບພັນທະບັດ ພ້ອມທັງຄ່າເສຍໂອກາດ ຕາມການຕົກລົງລະຫວ່າງຜູ້ອອກ ແລະ ຜູ້ຖືຄອງພັນທະບັດ ໃນກໍລະນີຜູ້ອອກພັນທະບັດ ຕ້ອງການໄຖ່ຖອນພັນທະບັດກ່ອນຄົບກໍານົດ. |
| ວັນພັກ | ຖ້າຫາກວັນຄົບກໍານົດຊໍາລະຕົ້ນທຶນ ຫຼື ດອກເບ້ຍ ຫຼື ມື້ທີ່ຕ້ອງໄດ້ເຮັດການຊໍາລະອື່ນໆ ທີ່ກ່ຽວຂ້ອງກັບພັນທະບັດໃຫ້ແກ່ຜູ້ຖືຄອງພັນທະບັດ ຫາກກົງກັບວັນພັກ, ວັນຊໍາລະເງິນດັ່ງກ່າວຈະຖືກເລື່ອນເປັນວັນລັດຖະການຖັດໄປ ໂດຍຈະບໍ່ມີການຄໍານວນດອກເບ້ຍສໍາລັບການເລື່ອນວັນຊໍາລະເງິນ. |

### 3. ການຈົດທະບຽນ ໃນຕະຫຼາດຫຼັກຊັບລາວ

ຜູ້ອອກພັນທະບັດ ຈະເອົາພັນທະບັດໄປຈົດທະບຽນໃນ ຕລຊລ ເພື່ອດຳເນີນການຊື້-ຂາຍພັນທະບັດ ໂດຍປະຕິບັດຕາມລະບຽບການຈົດທະບຽນຂອງ ຕລຊລ.

### 4. ພັນທະທາງອາກອນຂອງຜູ້ຖືຄອງພັນທະບັດ

ອີງຕາມ ດຳລັດວ່າດ້ວຍພັນທະບັດລັດຖະບານ ເລກທີ 101/ລບ, ລົງວັນທີ 20 ມີນາ 2017, ມາດຕາ 37 ລະບຸໄວ້ວ່າ: ຜູ້ຖືຄອງພັນທະບັດ ຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກອັດຕາດອກເບ້ຍພັນທະບັດ ຕາມກົດໝາຍທີ່ໄດ້ກຳນົດໄວ້.

### 5. ໄລຍະເປີດຈອງຊື້ພັນທະບັດ

ໄລຍະການສະເໜີຂາຍພັນທະບັດໃຫ້ກັບຜູ້ລົງທຶນ: ເວລາ 8:30 ໂມງ ຫາ 15:30 ໂມງ ຕັ້ງແຕ່ວັນທີ 11 ຫາ 17 ທັນວາ 2018.

ຜູ້ລົງທຶນສາມາດພົວພັນເອົາໜັງສືຊວນຊື້ ແລະ ແບບຟອມການຈອງຊື້ພັນທະບັດຕາມທີ່ຢູ່ຂອງຕົວແທນຈຳໜ່າຍ ດັ່ງລາຍລະອຽດລຸ່ມນີ້:

| ຊື່ | ທີ່ຢູ່ |
|---|---|
| ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ | ສຳນັກງານຕັ້ງຢູ່ຊັ້ນ 5, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂທ: (856-21) 265-461-4, ແຟກສ: (856-21) 265-465-6 Website: www.lxs.com.la |
| ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ | ສຳນັກງານຕັ້ງຢູ່ຊັ້ນ 7, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂທ: (856-21) 265477, ແຟກສ: (856-21) 265488 Website: www.bcel-kt.com |
| ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ | ສຳນັກງານຕັ້ງຢູ່ຊັ້ນ 6, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂທ: (856-21) 419220, ແຟກສ: (856-21) 419221 Website: www.lcs.com.la |

### 6. ວິທີການຈອງຊື້ພັນທະບັດ

ຜູ້ຈອງຊື້ພັນທະບັດ ສາມາດພົວພັນເອົາໜັງສືຊວນຊື້ ແລະ ແບບຟອມຈອງຊື້ພັນທະບັດໄດ້ຈາກຕົວແທນຈຳໜ່າຍພາຍໃນໄລຍະເວລາເປີດຈອງຊື້ພັນທະບັດ ທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້. ຜູ້ຈອງຊື້ພັນທະບັດ ຕ້ອງປະກອບຂໍ້ມູນໃສ່ແບບຟອມຈອງຊື້ພັນທະບັດຢ່າງຄົບຖ້ວນ ແລະ ຈະແຈ້ງ ພ້ອມທັງລົງລາຍເຊັນ ແລະ ຕ້ອງນຳເອົາແບບຟອມຈອງຊື້ພັນທະບັດ ພ້ອມເອກະສານຢັ້ງຢືນຕົວຕົນຂອງຜູ້ຈອງຊື້ພັນທະບັດ ຕາມທີ່ຕົວແທນຈຳໜ່າຍໄດ້ກຳນົດ ຄັດຕິດກັບແບບຟອມດັ່ງກ່າວ ແລະ ຍື່ນເອກະສານທັງໝົດໃຫ້ກັບຕົວແທນຈຳໜ່າຍ ພ້ອມທັງຊຳລະເງິນຄ່າຈອງຊື້ໃຫ້ຄົບຖ້ວນພາຍໃນໄລຍະເວລາເປີດຈອງຊື້ພັນທະບັດ.

ໃນການອອກຈຳໜ່າຍພັນທະບັດທັງໝົດ ການຈອງຊື້ພັນທະບັດຕ້ອງຊື້ຂັ້ນຕ່ຳ 10.000.000 (ສິບລ້ານ) ກີບ ແລະ ທະວີຄູນຄັ້ງລະ 10.000.000 (ສິບລ້ານ) ກີບຂຶ້ນໄປ.

**ເອກະສານຢັ້ງຢືນຕົວຕົນທີ່ຕ້ອງການ:**

- ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ສຳລັບນັກລົງທຶນພາຍໃນ;
- ສຳເນົາໜັງສືເດີນທາງ (Passport) ສຳລັບນັກລົງທຶນຕ່າງປະເທດ;
- ໃບມອບສິດຈາກຜູ້ຈອງຊື້ ກໍລະນີທີ່ໃຫ້ບຸກຄົນທີສາມມາຈອງຊື້ພັນທະບັດແທນ;
- ນັກລົງທຶນທີ່ເປັນບໍລິສັດ ຫຼື ສະຖາບັນ ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາບັດປະຈຳຕົວ ຫຼື ໜັງສືເດີນທາງ ຂອງບຸກຄົນທີ່ໄດ້ຮັບມອບສິດ.

## 7. ວິທີການຊຳລະເງິນຈອງຊື້ພັນທະບັດ

ນັກລົງທຶນທີ່ຕ້ອງການຈອງຊື້ພັນທະບັດຕ້ອງປະຕິບັດຕາມຂັ້ນຕອນການຈອງຊື້ພັນທະບັດຕາມການກຳນົດຂອງຕົວແທນຈຳໜ່າຍ ແລະ ຈະຕ້ອງຊຳລະການຈອງຊື້ພັນທະບັດໂດຍການໂອນເງິນເຂົ້າບັນຊີຈອງຊື້ພັນທະບັດທີ່ລະບຸໃນໃບຈອງໃຫ້ຄົບຖ້ວນຕາມຈຳນວນ ພາຍຫຼັງ ສຳເລັດການຈອງຊື້ ຕົວແທນຈຳໜ່າຍຈະສຳເນົາເອກະສານຢັ້ງການຈອງໃນເບື້ອງຕົ້ນໃຫ້ແກ່ນັກລົງທຶນ.

ຜູ້ຈອງຊື້ພັນທະບັດຈະເປັນຜູ້ຮັບຜິດຊອບຈ່າຍຄ່າທຳນຽມຂອງທະນາຄານ ຫຼື ຄ່າໃຊ້ຈ່າຍຕ່າງໆ ທີ່ພົວພັນເຖິງອັດຕາແລກປ່ຽນເງິນຕາຕ່າງປະເທດ ໂດຍຊຳລະແຍກອອກຕ່າງຫາກຈາກການຊຳລະຄ່າຈອງຊື້ພັນທະບັດ ແລະ ຈະສົ່ງຫຼັກຖານການຊຳລະດັ່ງກ່າວໃຫ້ແກ່ຕົວແທນຈຳໜ່າຍພັນທະບັດ ໃນມື້ທີ່ມີການຢັ້ງຢືນການຈອງພັນທະບັດ. ຜູ້ຈອງຊື້ພັນທະບັດທີ່ໄດ້ຊຳລະຄ່າຈອງຊື້ພັນທະບັດແລ້ວບໍ່ສາມາດຍົກເລີກການຈອງຊື້ພັນທະບັດ ແລະ ຮຽກຮ້ອງເອົາເງິນຄ່າຈອງຊື້ພັນທະບັດຄືນ.

## 8. ວິທີການຈັດສັນພັນທະບັດ

ພາຍຫຼັງທີ່ຕົວແທນຈຳໜ່າຍ ໄດ້ຮັບການຈອງຊື້ພັນທະບັດທີ່ຖືກຕ້ອງຕາມຂັ້ນຕອນແລ້ວ ການແບ່ງປັນພັນທະບັດໃຫ້ນັກລົງທຶນແມ່ນຈະໄດ້ດຳເນີນໄປ ເຊິ່ງຄາດວ່າຈະສຳເລັດພາຍໃນ 3 ວັນລັດຖະການ ຫຼັງຈາກສິ້ນສຸດໄລຍະເວລາການເປີດຈອງຊື້ພັນທະບັດ ຕົວແທນຈຳໜ່າຍມີສິດພິຈາລະນາໃນການແບ່ງປັນພັນທະບັດໃຫ້ກັບນັກລົງທຶນ ໂດຍການນຳໃຊ້ວິທີການ "ມາກ່ອນໄດ້ກ່ອນ" ແຕ່ພັນທະບັດຈະຖືກຈັດສັນໃຫ້ສອດຄ່ອງຕາມລະບຽບການ ເຖິງຢ່າງໃດກໍ່ຕາມ ຕົວແທນຈຳໜ່າຍພັນທະບັດຂໍສະຫງວນສິດໃນການປະຕິເສດການຈອງຊື້ພັນທະບັດ ແລະ ການແບ່ງປັນພັນທະບັດຕາມໃບຈອງຊື້ ໃນກໍລະນີທີ່ຕົວແທນຈຳໜ່າຍພິຈາລະນາແລ້ວເຫັນວ່າການຈອງຊື້ພັນທະບັດດັ່ງກ່າວ ເກີດບັນຫາ ຫຼື ຂໍ້ຈຳກັດໃນການດຳເນີນການ ເພື່ອໃຫ້ການອອກຈຳໜ່າຍພັນທະບັດໃນຄັ້ງນີ້ປະສົບຜົນສຳເລັດ.

ໃນກໍລະນີພັນທະບັດທີ່ອອກຈຳໜ່າຍຫາກຖືກຈອງຊື້ໝົດກ່ອນວັນເວລາທີ່ກຳນົດໄວ້ ຕົວແທນຈຳໜ່າຍສາມາດປິດການຈອງຊື້ພັນທະບັດກ່ອນເວລາທີ່ກຳນົດໄວ້.

## 9. ການອອກໃບຢັ້ງຢືນການຈັດສັນພັນທະບັດ

ຕົວແທນຈຳໜ່າຍພັນທະບັດທີ່ໄດ້ຮັບເອົາການຈອງຊື້ພັນທະບັດຈະອອກໃບຢັ້ງຢືນທີ່ເປັນຫຼັກຖານກ່ຽວກັບການຈອງຊື້ພັນທະບັດໃຫ້ຜູ້ຈອງຊື້ ພ້ອມທັງແຈ້ງກ່ຽວກັບຈຳນວນພັນທະບັດທີ່ໄດ້ຮັບການແບ່ງປັນ.

## 10. ການສົ່ງເງິນຈອງຊື້ພັນທະບັດຄືນ ກໍລະນີບໍ່ໄດ້ຮັບການຈັດສັນພັນທະບັດ

ກໍລະນີ ຜູ້ລົງທຶນທີ່ຈອງຊື້ພັນທະບັດ ບໍ່ໄດ້ຮັບການແບ່ງປັນພັນທະບັດ ຕາມຈຳນວນທີ່ຕົນຈອງຊື້ ທັງໝົດ ຫຼື ບາງສ່ວນ ຕົວແທນຈຳໜ່າຍ ຈະສົ່ງເງິນທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ພັນທະບັດ ພາຍໃນກຳນົດເວລາຫ້າວັນລັດຖະການ ນັບແຕ່ວັນສິ້ນສຸດການເປີດຈອງຊື້ພັນທະບັດ.

ກໍລະນີ ກາຍກຳນົດເວລາດັ່ງກ່າວ ຕົວແທນຈຳໜ່າຍຈະຮັບຜິດຊອບສົ່ງເງິນຄືນ ທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ພັນທະບັດ ພ້ອມດ້ວຍດອກເບ້ຍ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນຂອງຕົວແທນຈຳໜ່າຍພັນທະບັດໃນໄລຍະນັ້ນ.

## 11. ການສົ່ງມອບພັນທະບັດ

ນາຍທະບຽນພັນທະບັດຈະຝາກພັນທະບັດເຂົ້າບັນຊີພັນທະບັດທີ່ຜູ້ຈອງຊື້ພັນທະບັດທີ່ມີບັນຊີຊື້-ຂາຍພັນທະບັດຢູ່ນຳບໍລິສັດຫຼັກຊັບທີ່ເປັນສະມາຊິກຂອງສູນຮັບຝາກຫຼັກຊັບ ຂອງ ຕລຊລ ຕາມທີ່ໄດ້ແຈ້ງໃຫ້ຜູ້ຈອງຊື້ພັນທະບັດຮັບຊາບໄວ້ໃນແບບຟອມຈອງຊື້ພັນທະບັດ.

## 12. ຂໍ້ຈຳກັດຂອງການໂອນພັນທະບັດ

ພັນທະບັດທີ່ອອກຈຳໜ່າຍໃນຄັ້ງນີ້ບໍ່ມີຂໍ້ຈຳກັດໃນການໂອນພັນທະບັດ, ແຕ່ຕ້ອງເສຍຄ່າທຳນຽມໃນການໂອນພັນທະບັດ ຕາມລະບຽບການທີ່ກ່ຽວຂ້ອງ.

## 13. ການນຳໃຊ້ພັນທະບັດເປັນຫຼັກຊັບຄ້ຳປະກັນ

ພັນທະບັດທີ່ອອກຈຳໜ່າຍເປັນຫຼັກຊັບອະໃບ (Scripless) ດັ່ງນັ້ນ ຜູ້ຖືຄອງພັນທະບັດ ທີ່ມີຄວາມຕ້ອງການນຳເອົາພັນທະບັດ ໄປເປັນຫຼັກຊັບຄ້ຳປະກັນ ຕ້ອງສະເໜີຕໍ່ສູນຮັບຝາກຫຼັກຊັບ ເພື່ອດຳເນີນການຕາມລະບຽບທີ່ກ່ຽວຂ້ອງ.

## 14. ການສະເໜີຂໍໃບຢັ້ງຢືນຍອດການຖືຄອງພັນທະບັດ

ສູນຮັບຝາກຫຼັກຊັບ ເປັນຜູ້ອອກໃບຢັ້ງຢືນຍອດການຖືຄອງພັນທະບັດຈົດທະບຽນ ຕາມການສະເໜີຂອງຜູ້ຖືຄອງພັນທະບັດແຕ່ລະລາຍ.

## 15. ສິດ ແລະ ໜ້າທີ່ ຂອງຜູ້ອອກພັນທະບັດ ແລະ ຜູ້ຖືຄອງພັນທະບັດ

1) ສິດ ແລະ ໜ້າທີ່ ຂອງຜູ້ອອກພັນທະບັດ

- ຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ຢ່າງຄົບຖ້ວນ ເມື່ອຄົບກຳນົດເວລາ;

- ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃຫ້ແກ່ຜູ້ລົງທຶນຕາມລະບຽບການ;
- ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2) ສິດ ແລະ ໜ້າທີ່ ຂອງຜູ້ຖືຄອງພັນທະບັດ

- ໄດ້ຮັບການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ຢ່າງຄົບຖ້ວນ ເມື່ອຄົບກຳນົດເວລາ;
- ສາມາດຊື້-ຂາຍ, ມອບ, ໂອນ ແລະ ນຳໄປເປັນຫຼັກຊັບຄ້ຳປະກັນ ຕາມລະບຽບທີ່ກ່ຽວຂ້ອງ;
- ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## 16. ຂໍ້ມູນຜູ້ອອກພັນທະບັດ, ທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍ

| ຊື່ | ທີ່ຢູ່ |
|---|---|
| ຜູ້ອອກພັນທະບັດ | ກະຊວງການເງິນ ຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ, ສຳນັກງານຕັ້ງຢູ່ຖະໜົນ 23 ສິງຫາ, ຕູ້ ປນ 44, ນະຄອນຫຼວງວຽງຈັນ, ສປປ ລາວ<br>Website: www.mof.gov.la |
| ທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍ ຫຼັກ | ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ<br>ສຳນັກງານຕັ້ງຢູ່ຊັ້ນ 5, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 265-461-4<br>ແຟກສ: (856-21) 265-465-6<br>Website: www.lxs.com.la |
| ທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍ ຮ່ວມ | ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ<br>ສຳນັກງານຕັ້ງຢູ່ຊັ້ນ 7, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 265477<br>ແຟກສ: (856-21) 265488<br>Website: www.bcel-kt.com |
| ທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍ ຮ່ວມ | ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ<br>ສຳນັກງານຕັ້ງຢູ່ຊັ້ນ 6, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4 , ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: (856-21) 419220<br>ແຟກສ: (856-21) 419221<br>Website: www.lcs.com.la |

## ພາກທີ IV

## ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ

### 1. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຜູ້ອອກພັນທະບັດ

ຂ້າພະເຈົ້າ ໃນນາມຕົວແທນທີ່ໄດ້ຮັບການແຕ່ງຕັ້ງຈາກຜູ້ອອກພັນທະບັດໄດ້ກວດກາຂໍ້ມູນທີ່ລະບຸໃນໜັງສືຊວນຊື້ສະບັບພາສາລາວແລ້ວດ້ວຍຄວາມລະມັດລະວັງ ພ້ອມດ້ວຍຄຳເຕືອນ, ໃນນາມຕຳແໜ່ງ ຫົວໜ້າ ຫ້ອງການກະຊວງການເງິນ ຂໍຢັ້ງຢືນວ່າ ຂໍ້ມູນດັ່ງກ່າວແມ່ນຖືກຕ້ອງ ແລະ ສົມບູນ.

ເພື່ອເປັນຫຼັກຖານ, ພວກຂ້າພະເຈົ້າຂໍຢັ້ງຢືນອີກວ່າ ຂໍ້ມູນທັງໝົດແມ່ນເປັນເອກະສານທີ່ໄດ້ຮັບການຢັ້ງຢືນວ່າມີຈິງ ແລະ ຖືກຕ້ອງເປັນຊຸດດຽວກັນ. ພວກຂ້າພະເຈົ້າໄດ້ມອບສິດອຳນາດໃຫ້ ທ່ານ ສົມບູນ ອິນທະປັດຖາ ເຊັນກຳກັບໄວ້ໃນທຸກໜ້າຂອງເອກະສານ. ຖ້າຫາກເອກະສານໃດໜຶ່ງບໍ່ມີການເຊັນກຳກັບຂອງ ທ່ານ ສົມບູນ ອິນທະປັດຖາ ດັ່ງກ່າວມານັ້ນ, ພວກຂ້າພະເຈົ້າຈະຖືວ່າເອກະສານດັ່ງກ່າວບໍ່ແມ່ນຂໍ້ມູນທີ່ພວກຂ້າພະເຈົ້າໄດ້ມີການຢັ້ງຢືນແລ້ວ.

**ຕົວແທນຂອງຜູ້ອອກພັນທະບັດ:**

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| ທ່ານ ສົມບູນ ອິນທະປັດຖາ | ຫົວໜ້າ ຫ້ອງການກະຊວງການເງິນ | |

**2. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍພັນທະບັດ**

ໜັງສືຊວນຊື້ສະບັບນີ້ ແມ່ນ ສ່ວນໜຶ່ງຂອງເອກະສານປະກອບສຳນວນຄຳຮ້ອງຂໍຈົດທະບຽນພັນທະບັດຂອງກະຊວງການເງິນຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ເຊິ່ງທັງສອງຝ່າຍ ໄດ້ກະກຽມໂດຍອີງຕາມສັນຍາວ່າດ້ວຍການຈັດຈ້າງທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍພັນທະບັດ.

ພວກຂ້າພະເຈົ້າບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ໃນຖານະທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍຫຼັກຂໍຢັ້ງຢືນວ່າ ບົດວິເຄາະ, ການປະເມີນ ແລະ ການໃຊ້ສຳນວນຄຳສັບໃນໜັງສືຊວນຊື້ສະບັບນີ້ມີຄວາມຖືກຕ້ອງ, ຄົບຖ້ວນບົນພື້ນຖານຂໍ້ມູນທີ່ຜູ້ອອກພັນທະບັດຕອບສະໜອງໃຫ້.

**ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ,** ທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍຫຼັກ

| ຊື່ | ຕຳແໜ່ງ | ລາຍເຊັນ |
|---|---|---|
| ທ່ານ ອານຸກອນ ສຸທຳມະວົງ | ຮັກສາການຜູ້ອຳນວຍການ | |

# ເອກະສານຄັດຕິດ 1

## ຮ່າງໃບພັນທະບັດລວມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------------------------

## ໃບພັນທະບັດລວມ
## Government Bond Global Certificate

ເລກທີ: ......./.....

No: ......./......

ຊື່ຜູ້ອອກພັນທະບັດ: ..........

ຊື່ພັນທະບັດ: ..........

ປະເພດພັນທະບັດ: ..........

ລະຫັດຫຼັກຊັບສາກົນ: ..........

ວັນ, ເດືອນ, ປີ ອອກພັນທະບັດ: ..........

ວັນ, ເດືອນ, ປີ ຄົບກຳນົດໄຖ່ຖອນ: ..........

ອາຍຸ: ..........

ມູນຄ່າກຳນົດ: .......... ກີບ/ໜ່ວຍ

ຈຳນວນໜ່ວຍຂອງພັນທະບັດ: .......... ໜ່ວຍ

ວົງເງິນລວມ: .......... ກີບ

ປະເພດອັດຕາດອກເບ້ຍ: ..........

ອັດຕາດອກເບ້ຍ: ..........

Name of Issuer: ..........

Name of the Bond: ..........

Type of Bond: ..........

ISIN Code: ..........

Issue Date: ..........

Maturity Date: ..........

Tenor: ..........

Face Value: .......... KIP/Unit

Issued Amount: .......... Units

Total Amount: .......... KIP

Coupon Type: ..........

Coupon Rate:

**ລັດຖະມົນຕີກະຊວງການເງິນ**

Minister of Ministry of Finance

# ເອກະສານຄັດຕິດ 2

## ແບບຟອມສະເໜີຂໍຈອງຊື້ພັນທະບັດ

**ແບບຟອມການຈອງຊື້ພັນທະບັດລັດຖະບານ**

ກະຊວງການເງິນ ຕາງໜ້າໃຫ້ລັດຖະບານ ສປປ ລາວ ສະເໜີຂາຍພັນທະບັດ ໃຫ້ມວນຊົນ

ມູນຄ່າກຳນົດ ແລະ ລາຄາສະເໜີຂາຍ 1.000.000 ກີບຕໍ່ໜ່ວຍ, ຈອງຊື້ຂັ້ນຕໍ່າ 10.000.000 ກີບ ແລະ ທະວີຄູນຄັ້ງລະ 10.000.000 ກີບ

**ວັນທີ:____/______/_______** **ເລກທີ ____________________**

**ຜູ້ຈອງຊື້ພັນທະບັດ ກະລຸນາຕື່ມຂໍ້ມູນໃສ່ດ້ານລຸ່ມນີ້ໃຫ້ຄົບຖ້ວນ ຊັດເຈນ**

ຊື່ ແລະ ນາມສະກຸນ ຫຼື ນິຕິບຸກຄົນ ( ພາສາອັງກິດ )____________________________________________

ເລກບັນຊີພັນທະບັດ ________________ ສຳເນົາເອກະສານປະກອບ ( ) ບັດປະຊາຊົນ ( ) ບັດຕ່າງດ້າວ ( ) ໜັງສືຜ່ານແດນ ( ) ໃບທະບຽນວິສາຫະກິດ ເລກທີ ______________________ ສັນຊາດ __________________ວັນເດືອນປີເກີດ _______________ອາຊີບ______________________________

ທີ່ຢູ່ປະຈຸບັນ______________________________________________________________ ປະເທດ____________________

ໂທລະສັບ__________________ ມືຖື__________________ ແຟັກ__________________ອີເມວ______________________________

**ຂ້າພະເຈົ້າ/ພວກເຮົາ ຂໍສະເໜີຈອງຊື້ພັນທະບັດລັດຖະບານ ໂດຍມີລາຍລະອຽດ ດັ່ງຕໍ່ໄປນີ້:**

| ອາຍຸ (ປີ) | ຈຳນວນ (ໜ່ວຍ) | ລາຄາສະເໜີຂາຍ (ກີບ/ໜ່ວຍ) | ຈຳນວນເງິນທີ່ຕ້ອງຈ່າຍ (ກີບ) | ຈຳນວນເງິນເປັນຕົວໜັງສື (ກີບ) |
|---|---|---|---|---|
| 1 | | 1.000.000 | | |
| 3 | | | | |
| 5 | | | | |
| 7 | | | | |
| **ລວມ** | | | | |

ສັ່ງຈ່າຍຜ່ານ: **ທະນາຄານ ພັດທະນາລາວ (ທພລ)** ດັ່ງບັນຊີລຸ່ມນີ້:

ຊື່ບັນຊີ: LXS (GOVERNMENT BOND FOR SUBSCRIPTION ບັນຊີເລກທີ: **0302000010003493** ສະກຸນເງິນ: **ກີບ**

ຈຳນວນ: ____________________ກີບ, ທີ່ຢູ່ ທພລ: ເລກທີ 013, ຖະໜົນ ສຸພານຸວົງ ນະຄອນຫຼວງວຽງຈັນ, ສປປ ລາວ ລະຫັດ SWIFT: LDBLALA.

ຖ້າຂ້າພະເຈົ້າ/ພວກເຮົາ ໄດ້ຮັບການຈັດສັນພັນທະບັດແລ້ວ, ຂ້າພະເຈົ້າ/ພວກເຮົາ ເຫັນດີໃຫ້ ຕົວແທນຈຳໜ່າຍພັນທະບັດ ອອກໃບຢັ້ງຢືນການຖືຄອງພັນທະບັດໃນຊື່ "ສູນຮັບຝາກຫຼັກຊັບ" ສຳລັບການຈັດສັນພັນທະບັດ ແລະ ໂອນ ຕໍ່ໄປຫາບໍລິສັດຫຼັກຊັບ________________________ເພື່ອຝາກພັນທະບັດດັ່ງກ່າວໄວ້ທີ່"ສູນຮັບຝາກຫຼັກຊັບ " ໃນບັນຊີພັນທະບັດຂອງຂ້າພະເຈົ້າ/ພວກເຮົາ ຊື່ບັນຊີພັນທະບັດ :____________________________________________ (ຊື່ຜູ້ຈອງຈະຕ້ອງເປັນຊື່ດຽວກັນກັບຊື່ບັນຊີພັນທະບັດ), ເລກບັນຊີພັນທະບັດ:____________________

ຖ້າຂ້າພະເຈົ້າ/ພວກເຮົາ ບໍ່ໄດ້ຮັບການຈັດສັນຈຳນວນພັນທະບັດທີ່ຈອງ ຫຼື ບໍ່ໄດ້ຄົບຖ້ວນຕາມຈຳນວນທີ່ສັ່ງຈອງ, ຂ້າພະເຈົ້າ/ພວກເຮົາ ເຫັນດີໃຫ້ສົ່ງເງິນຄືນ ຫຼື ສົ່ງເງິນຈຳນວນທີ່ເກີນໄປຫາບັນຊີຂອງຂ້າພະເຈົ້າ/ພວກເຮົາ ດັ່ງລາຍລະອຽດຂໍ້ມູນລຸ່ມນີ້:

☐ ຝາກເງິນໄປບັນຊີຂ້າພະເຈົ້າ/ພວກເຮົາ ທີ່ທະນາຄານ: ______________________________________, ສາຂາ:________________________,

ເລກບັນຊີ____________________________

(ໝາຍເຫດ: ຄ່າທຳນຽມ ທະນາຄານ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ເກີດຂຶ້ນຈະຕ້ອງໄດ້ຫັກຈາກຈຳນວນເງິນທີ່ສົ່ງຄືນຂອງຜູ້ສັ່ງຈອງຊື້ພັນທະບັດ)

ຂ້າພະເຈົ້າ/ພວກເຮົາ ຂໍດຳເນີນການຈອງຊື້ພັນທະບັດລັດຖະບານຂ້າງເທິງຕາມຈຳນວນທີ່ໄດ້ຮັບການຈັດສັນໃຫ້ຂ້າພະເຈົ້າ/ພວກເຮົາ ແລະ ຈະບໍ່ຍົກເລີກການຈອງຊື້ພັນທະບັດໃນຄັ້ງນີ້ ລວມທັງຍອມຮັບການສົ່ງເງິນຄືນ, ໃນກໍລະນີການຈອງຊື້ພັນທະບັດຂອງຂ້າພະເຈົ້າ/ພວກເຮົາຖືກປະຕິເສດຍ້ອນສາເຫດເອກະສານບໍ່ຄົບຖ້ວນຕາມທີ່ບໍລິສັດຕ້ອງການ ຫຼື ສາເຫດອື່ນໆ.

**ລາຍເຊັນຜູ້ສັ່ງຈອງ** ____________________

**ຊື່ແຈ້ງ** ________________________

**ທ່ານຄວນສຶກສາລາຍລະອຽດຂອງພັນທະບັດລັດຖະບານກ່ອນການລົງທຶນ**

| | | |
|---|---|---|
| >> ສຳລັບພະນັກງານເທົ່ານັ້ນ >> | ຜູ້ກວດກາ:________________________<br>ວັນທີ _____/_________/_________ | ຜູ້ປ້ອນຂໍ້ມູນ: ________________________<br>ວັນທີ _____/_________/_________ |

**ຜູ້ອະນຸມັດ:** ________________________

**ຊື່ແຈ້ງ** ________________________